


# ພຣະເຈົ້າຊົງສຳແດງຫົນທາງ



ຈົດໝາຍຄຳສອນ (ຕອນທີ່ 1)
ໂດຍ: ອາຈານ ເດເຣັກ ປີ້ຣນຊ

"ແຕ່ປະຕູທີ່ນຳໄປສູ່ຊີວິດກໍຄັບແຄບ ແລະທາງທີ່ນຳໄປສູ່ທີ່ນັ້ນກໍຍາກ...." (ມັດທາຍ7:14 ພຄສ2015)
ພຣະເຢຊູຊົງບັນຍາຍໃຫ້ເຫັນເຖິງພາບຊີວິດຄຣິສຕຽນ ເຊິ່ງແບ່ງອອກເປັນສອງ ຊ່ວງຕໍ່ເນື່ອງກັນຄື: ຊ່ວງທຳອິດເປັນປະຕູແຄບທີ່ເຮົາຕ້ອງຜ່ານເຂົ້າໄປ, ຊ່ວງທີ່ສອງເປັນທາງ ແຄບ (ພຣະຄຳພີບາງເຫຼັ້ມແປວ່າທາງລຳບາກ-ຜູ້ແປ) ທີ່ເຮົາຕ້ອງດຳເນີນໄປ. "ປະຕູ" ຫມາຍ ເຖິງປະສົບການການເຂົ້າໄປພຽງຄັ້ງດຽວຄືສິ່ງທີ່ພຣະຄຳພີເອີ້ນວ່າ "ການໄດ້ຮັບຄວາມລອດ " ຫຼື "ການບັງເກີດໃຫມ່" ສ່ວນ "ທາງ" ນັ້ນຫມາຍເຖິງຊີວິດຮູບແບບໃຫມ່ ເຊິ່ງປະສົບການ ການຜ່ານເຂົ້າປະຕູນັ້ນຈະນຳທາງເຮົາດຳເນີນຕໍ່ໄປ.

ແທ້ຈິງແລ້ວ ພຣະເຢຊູຊົງເຕືອນບໍ່ໃຫ້ເຮົາພະຍາຍາມ ແຍກຊີວິດສອງຊ່ວງນີ້ອອກຈາກກັນ ທາງເຂົ້າດຽວທີ່ຈະນຳໄປສູ່ທາງແຄບໄດ້ນັ້ນຄືທາງປະຕູແຄບ, ຫາກເຮົາບໍ່ໄດ້ບັງເກີດໃຫມ່ ເຮົາກໍບໍ່ສາມາກເລີ່ມຕົ້ນດຳເນີນຊີວິດຄຣິສຕຽນໄດ້ ໃນທາງກັບກັນ ຈຸດປະສົງຂອງການຜ່ານ ເຂົ້າທາງປະຕູກໍຄື ເພື່ອດຳເນີນໄປຕາມທາງນັ້ນ, ດັ່ງນັ້ນ ຊີວິດທີ່ຄົບບໍຣິບູນທີ່ພຣະເຢຊູຊົງ ເຊື້ອເຊີນໃຫ້ເຮົາເຂົ້າໄປນັ້ນບໍ່ໄດ້ຫມາຍເຖິງການຜ່ານເຂົ້າປະຕູພຽງຢ່າງດຽວແຕ່ຫ ມາຍເຖິງ ການດຳເນີນຕໍ່ໄປຕາມທາງຊຶ່ງປະຕູໄດ້ນຳເຮົາຜ່ານເຂົ້າໄປດ້ວຍ.

## ເສັ້ນທາງນັ້ນ

ສິ່ງສຳຄັນທີ່ສຸດຄື ການທີ່ເຮົາບໍ່ມີຄວາມຄິດວ່າ ຊີວິດຄຣິສຕຽນເປັນພຽງສະພາວະທີ່ຄົງສະພາບ ເດີມ (ຫມາຍເຖິງຄົງທີ່, ຢູ່ນິ່ງເສຍ, ບໍ່ມີການພັດທະນາ ຫຼືບໍ່ມີການເຄື່ອນໄຫວໃດງ-ຜູ້ແປ) ຫຼັງຈາກ "ໄດ້ຮັບຄວາມລອດ" ຫຼື "ໄດ້ເປັນຄຣິສຕຽນ" ແລ້ວ ເພາະໃນຊ່ວງທຳອິດຂອງ ຄຣິສຕະຈັກນັ້ນ ຍັງບໍ່ມີເອີ້ນວ່າສາສາໜາຄຣິດ ສິ່ງທີ່ເຮົາເອີ້ນໃນປັດຈຸບັນວ່າສາສາໜາຄຣິດ ນັ້ນ ຜູ້ຄົນໄດ້ເຄີຍເອີ້ນກັນວ່າ "ທາງນັ້ນ" ເຊັ່ນເມື່ອໂຊໂລແຫ່ງເມືອງຕາໂຊ ອອກເດີນທາງສູ່ ເມືອງດາມັສກັດ ແລະຂໍໜັງສືແນະນຳຕົວໄປທີ່ທຳມະສາລາໃນເມືອງດາມັສກັດ ເພື່ອວ່າ "ຖ້າພົບຜູ້ໃດບໍ່ວ່າຍິງ ຫຼືຊາຍກໍຕາມທີ່ເຊື່ອໃນອົງພຣະຜູ້ເປັນເຈົ້າ "ທາງນັ້ນ " ...ລາວກໍຈະຈັບ ພວກເຂົາມັດໄວ ແລ້ວນຳມາທີ່ນະຄອນເຢຣູຊາເລັມ." (ກິດຈະການ9:2) ຕໍ່ມາຫຼັງຈາກທີ່ໂປໂລ ໄດ້ເທດສະໜາໃນເມືອງເອເຟໂຊ ເຖິງຊ່ວງໄລຍະເວລາໜຶ່ງ ກໍ່ໄດ້ຍິນສອງສຽງເວົ້າກ່ຽວກັບ ຜົນທີ່ເກີດຂຶ້ນຄື "ແຕ່ມີບາງຄົນໃຈແຂງ ແລະບໍ່ຍອມເຊື່ອ ຊ້ຳຍັງເວົ້າຄຳຫຍາບຊ້າເລື່ອງ 'ທາງນັ້ນ' ຕໍ່ໜ້າຄົນທັງຫຼາຍ." ແລະ "ໃນຄາວນີ້ ໄດ້ເກີດມີການວຸ້ນວາຍຢ່າງຍິ່ງໃຫຍ່ເພາະເຫດ 'ທາງນັ້ນ'"(ກິດຈະການ19:9,23) (ສຳລັບກໍລະນີອື່ນໆທີ່ສາສາໜາຄຣິດຖືກເອີ້ນວ່າ 'ທາງນັ້ນ' ເບິ່ງກິດຈະການ 22:4, 24:14,22) *('ທາງນັ້ນ' ຫມາຍເຖິງທາງຂອງພຣະເຈົ້າ)*

ແນວຄວາມຄິດດຽວກັນນີ້ປາກົດຢູ່ໃນຂໍ້ຄວາມອື່ນໆໃນພຣະຄຳພີເຊັ່ນ: ຕອນທີ່ໂປໂລກ່າວ ກັບຊາວອາແຖນວ່າ: "ໃນພຣະອົງນັ້ນເຮົາມີຊີວິດເຄື່ອນໄຫວໄປມາ ແລະເປັນຢູ່" (ກິດຈະການ 17:28) ຖ້າເຮົາ "ມີຊີວິດ" ເຮົາຈະໄດ້ເຄື່ອນໄຫວໄປມາ "ຊີວິດບໍ່ເຄີຍຫຍຸດນິ່ງ ຫຼືບໍ່ເຄີຍເຄື່ອນ ໄຫວ ຊີວິດຫມາຍເຖິງການເຕີບໂຕ ມີການເຄື່ອນໄຫວ,

ລິຂະສິດ © 2012 ພັນທະກິດ ເດເຣັກ ປີ້ຣນຊ

ການພັດທະນາ, ການກ້າວຫນ້າຢູ່ສະ ເໝີ. ສຸພາສິດ 4:18 (ພຄສ2015 ) ກ່າວວ່າ: "ທາງຂອງຄົນຊອບທຳນັ້ ເປັນດັ່ງຕາເວັນຂຶ້ນ ໃນຍາມເຊົ້າ ໂດຍສ່ອງແສງເຫຼື້ອມໃສຂຶ້ນໄປຈົນກ່ວາກາງເວັນຈະຮອດ." ໃນເສັ້ນທາງຊີວິດ ຄຣິສຕຽນນັ້ນ ເຮົາກຳລັງກ້າວໄປທາງຫນ້າຢ່າງຕໍ່ເນື່ອງສູ່ຄວາມສະຫວ່າງ ທີ່ສົມບູນຍິ່ງຂຶ້ນ ເມື່ອເຮົາກ້າວໄປຕາມເສັ້ນທາງແຕ່ລະກ້າວ ແສງກໍຈະສະຫວ່າງຂຶ້ນ ແສງສະຫວ່າງຂອງມື້ວານ ຈະບໍ່ສະຫວ່າງພຽງພໍສຳລັບມື້ນີ້, ບໍ່ມີໂອກາດສຳລັບການຢືນນິ່ງ ແລະ ຍິ່ງມີໂອກາດນ້ອຍກ່ວາ ອີກສຳລັບການຫັນຫຼັງກັບ ບໍ່ວ່າອາດິດຈະເຄີຍສົດໃສພຽງໃດ ໃນອານາຄົດກໍຈະສົດໃສກ່ວາ ສະເໝີ.

ຄວາມທ້າທາຍໃຫ້ກ້າວໄປຂ້າງຫນ້າຢ່າງຕໍ່ເນື່ອງ ຕາມແນວທາງຄຣິດສຕຽນນີ້ຟັງເບິ່ງຄືຍາກ ແລະເປັນການຮຽກຮ້ອງຫຼາຍເກີນໄປຫຼືບໍ່? ຂ້າພະເຈົ້າຂໍມອບຖ້ອຍຄຳແຫ່ງຄວາມໝັ້ນໃຈ ອັນເປັນສຸກໃຫ້ແກ່ພວກເຈົ້າທັງຫຼາຍ "ເຮົາບໍ່ຕ້ອງເດີນເສັ້ນທາງນີ້ພຽງລຳພັງ" ເພາະວ່າອົງ ພຣະຜູ້ເປັນເຈົ້າຈະຊົງຢູ່ກັບເຮົາໃນທຸກກ້າວຢ່າງທີ່ເຮົາກ້າວໄປ ໃນພຣະສັນຍາເດີມນັ້ນພຣະອົງ ໄດ້ຊົງປະທານພຣະສັນຍາອັນສັກສິດແກ່ປະຊາກອນຂອງພຣະອົງວ່າ:

> “ເພາະເຮົາຢູ່ກັບພວກເຈົ້າ ສະນັ້ນຢ່າສູ່ຢ້ານກົວ ຢ່າສູ່ຢ້ານສິ່ງໃດໆ ເຮົາຄືພຣະເຈົ້າ ຂອງພວກເຈົ້າ ເຮົາຈະຊ່ວຍເຫຼືອໃຫ້ພວກເຈົ້າໄດ້ເຂັ້ມແຂງ ເຮົາຈະປົກປັກຮັກສາ ຊ່ວຍເຫຼືອພວກເຈົ້າໃຫ້ພົ້ນ.” (ເອຊາຢາ41:10; ພຄສ2015)

ພຣະສັນສັນຍາດັ່ງກ່າວ ຍັງໄດ້ຮັບການຢືນຢັນໃນພຣະສັນຍາໃຫມ່ໂດຍພຣະຄຣິດເອງອີກ ດ້ວຍວ່າ:

> “ນີ້ແຫຼະ ເຮົາຈະຢູ່ກັບເຈົ້າທັງຫຼາຍທຸກໆວັນຈົນສິ້ນໂລກນີ້.” (ມັດທາຍ 28:20)

## ສອງຄົນສາມາດອອກເດີນທາງໄປດ້ວຍກັນໄດ້ຫຼືບໍ?

ດັ່ງນັ້ນ ເຮົາຈຶ່ງຕ້ອງຮຽນຮູ້ທີ່ຈະດຳເນີນຊີວິດໄປກັບພຣະເຈົ້າ ສິ່ງນີ້ຫມາຍເຖິງຄວາມສຳພັນ ສ່ວນຕົວເນື່ອງກັບພຣະອົງ ອາໂມດ3:3 ຕັ້ງຄຳຖາມວ່າ "ຊາຍສອງຄົນເລີ່ມອອກເດີນທາງ ໄປດ້ວຍກັນໂດຍບໍ່ຕົກລົງກັນກ່ອນຈະເປັນໄປໄດ້ບໍ?" ຄຳຕອບທີ່ເຮົາຮູ້ກໍຄື ບໍ່ນັ້ນເອງ, ການທີ່ເຮົາຈະດຳເນີນຊີວິດໄປກັບພຣະເຈົ້າໄດ້ນັ້ນເຮົາຕ້ອງ "ຍອມຮັບ ຫຼືເຫັນພ້ອມ" ກັບພຣະອົງ.

ໂດຍທຳມະຊາດແລ້ວເຮົາບໍ່ເຄີຍຍອມຮັບ ຫຼືເຫັນດີເຫັນພ້ອມກັບພຣະເຈົ້າເລີຍ. ໃນທາງກົງກັນ ຂ້າມໂປໂລໄດ້ບອກກັບເຮົາ ໃນໂຣມ8:7ວ່າ: "ເຫດວ່າ ການເອົາໃຈໃສ່ເນື້ອຫນັງກ່ອນ ນັ້ນກໍ ເປັນສັດຕູຕໍ່ພຣະເຈົ້າ ເພາະບໍ່ຍອມຢູ່ໃຕ້ກົດບັນຍັດຂອງພຣະເຈົ້າ, ແທ້ຈິງແລ້ວຈະຢູ່ໃຕ້ກົດ ບັນຍັດຂອງພຣະເຈົ້າບໍ່ໄດ້." ຄຳວ່າ "ເນື້ອໜັງ" ຫມາຍເຖິງຄວາມຄິດ ແລະ ທັດສະນະຄະຕິ ຕາມທຳມະຊາດຂອງເຮົາທຸກຄົນ ກ່ອນທີ່ພຣະຄຸນຂອງພຣະເຈົ້າ ຈະເລີ່ມເຮັດການປ່ຽນແປງ ໃນເຮົາ ສິ່ງເຫຼົ່ານີ້ຂັດແຍ່ງກັບພຣະເຈົ້າໂດຍກົງ ແລະບໍ່ມີທາງທີ່ຈະລ່ອງລອຍກັນໄດ້ເລີຍ.

ໃນເອຊາຢາ 55:8-9 ພຣະເຈົ້າຊົງບອກເຮົາຢ່າງຊັດເຈນວ່າ "ຄວາມຄິດເຮົານັ້ນ ບໍ່ຄືຄວາມຄິດ ຂອງພວກເຈົ້າ. ແລະວິຖີທາງຂອງເຮົານັ້ນກໍແຕກຕ່າງໃດ ບໍ່ຄືວິທີທາງຂອງພວກເຈົ້າ. ຟ້າສະຫວັນສູງກ່ວາແຜ່ນດິນໂລກສັນໃດ ວິຖີທາງທັງຄວາມຄິດເຮົາກໍສູງກ່ວາສັນນັ້ນ." ຍິ່ງໄປກ່ວານັ້ນພຣະເຈົ້າຈະບໍ່ຊົງປ່ຽນແປງ ໃນພຣະຄຳມາລາກີ3:6 ພຣະອົງຊົງຕຣັດວ່າ: " ເຮົາແມ່ນພຣະເຈົ້າຢາເວ ແລະເຮົາບໍ່ປ່ຽນແປງ..."

ເນື່ອງຈາກແນວທາງ ແລະຄວາມຄິດຂອງພຣະເຈົ້ານັ້ນແຕກຕ່າງຈາກຂອງເຮົາ ແລະ ເນື່ອງຈາກພຣະເຈົ້າຈະບໍ່ຊົງປ່ຽນແປງ ຈຶ່ງເຫຼືອຄວາມເປັນໄປໄດ້ພຽງຢ່າງດຽວຄື ຫາກເຮົາ ຕ້ອງການທີ່ຈະດຳເນີນຊີວິດໄປກັບພຣະເຈົ້າ ເຮົາເອງຄືຜູ້ທີ່ຕ້ອງປ່ຽນແປງ "ຈົ່ງໃຫ້ຄົນຊົ່ວຮ້າຍ ປະວິທີດຳເນີນຊີວິດເດີມຂອງພວກເຂົາ ແລະປ່ຽນແນວທາງທີ່ພວກເຂົາເຄີຍຄິດນັ້ນ." (ເອຊາຢາ55:7 ) ທາງແລະຄວາມຄິດຂອງເຮົານັ້ນຈຳເປັນຕ້ອງໄດ້ຮັບການປ່ຽນແປງ ການປ່ຽນແປງນີ້ກໍ່ຄືການຍອມຈຳນົນທີ່ສົມບູນ ແລະການມອບຖວາຍຕົວທັງຫມົດຂອງເຮົາ ແດ່ພຣະເຈົ້າ.

## ຜູ້ໃດເປັນເຈົ້າຂອງ?

ໃນສິບເອັດບົດທຳອິດຂອງພຣະຄຳໂຣມ ໂປໂລໄດ້ເປີດເຜີຍເຖິງ ການຈັດຕຽມທີ່ສົມບູນ ຂອງພຣະເຈົ້າ ໃນການໄຖ່ເຮົາຜ່ານທາງຄວາມເຊື່ອໃນພຣະຄຣິດ ຈາກນັ້ນໂປໂລໄດ້ເລີ່ມຕົ້ນ ບົດທີ່12 ດ້ວຍຄຳວ່າ: " ດັ່ງນັ້ນ ພີ່ນ້ອງທັງຫຼາຍໂດຍເຫັນແກ່ຄວາມເມດຕາກາຣຸນາຂອງ ພຣະເຈົ້າ..." ຄຳວ່າ "ດັ່ງນັ້ນ" ຫມາຍເຖິງຫຍັງ? ຄຳນີ້ບົ່ງບອກເຖິງການຕອບສະໜອງທີ່ ຮຽກຮ້ອງຈາກເຮົາ ອັນເນື່ອງມາຈາກສິ່ງທີ່ພຣະເຈົ້າໄດ້ຊົງກະທຳເພື່ອເຮົາ ການຕອບສະໜອງ ນີ້ຄືຫຍັງ? ສິ່ງນີ້ມີລະບຸໄວ້ໃນພຣະຄຳດັ່ງຕໍ່ໄປນີ້:

> "ເຫດສະນັ້ນ ພີ່ນ້ອງທັງຫຼາຍເອີຍ ໂດຍເຫັນແກ່ພຣະເມດຕາກະຣຸນາຂອງພຣະເຈົ້າ ເຮົາຈຶ່ງ ຮຽກຮ້ອງພວກເຈົ້າໃຫ້ຖວາຍຕົວແກ່ພຣະເຈົ້າ ເປັນເຄື່ອງບູຊາອັນມີຊີວິດ ເປັນອັນບໍຣິສຸດ ແລະເປັນທີ່ພໍພຣະໄທພຣະເຈົ້າ ຊຶ່ງເປັນການນະມັດສະການໃຫ້ສົມ ກັບຜ່າຍວິນຍານຂອງເຈົ້າ ທັງຫຼາຍ ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈຂອງ ພວກເຈົ້າໃຫມ່ ແລ້ວອຸປະນິດໄສຂອງ ພວກເຈົ້າຈຶ່ງຈະປ່ຽນໃຫມ່ ເພື່ອພວກເຈົ້າຈະໄດ້ຮູ້ ນ້ຳພຣະໄທຂອງພຣະເຈົ້າ ຄືຈະຮູ້ວ່າອັນໃດດີ ອັນໃດເປັນທີ່ພໍພຣະໄທ ແລະ ອັນໃດດີທີ່ສຸດ." (ພຄສ2015)

ປະເດັນພື້ນຖານທີ່ໂປໂລກຳລັງກ່າວເຖິງຄື: ເລື່ອງຄວາມເປັນເຈົ້າຂອງໃນຖານະຄຣິສຕຽນ ເຮົາບໍ່ສາມາດອ້າງສິດວ່າ ເຮົາເປັນເຈົ້າຂອງຕົວເອງໄດ້ອີກຕໍ່ໄປ " ພວກເຈົ້າຮູ້ບໍ່ວ່າ ຮ່າງກາຍຂອງພວກເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດເຈົ້າ ຊົງສະຖິດໃນພວກເຈົ້າ ເຊິ້ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າທັງຫຼາຍບໍ່ແມ່ນເຈົ້າຂອງຕົວເຈົ້າເອງ ເພາະວ່າພຣະເຈົ້າ ໄດ້ຊົງຊື້ພວກເຈົ້າມາໃນລາຄາທີ່ສູງ ສະນັ້ນ ຈົ່ງຖວາຍພຣະກຽດແດ່ພຣະເຈົ້າດ້ວຍຮ່າງກາຍ ຂອງຕົນ" (1ໂກຣິນໂທ 6:19-20 ພຄສ2015) "ລາຄາ" ທີ່ເຮົາຖືກຊື້ມານັ້ນຄື "ແຕ່ຊົງໄຖ່ ດ້ວຍພຣະໂລຫິດ ອັນຊົງມີຄ່າຂອງພຣະຄຣິດ" (1ເປໂຕ1:18-19) ເນື່ອງດ້ວຍພຣະເຈົ້າໄດ້ຊົງ ຊື້ເຮົາໄວ້ດ້ວຍລາຄາອັນມະຫາສານ ເຊັ່ນນີ້ເຮົາຈຶ່ງເປັນຂອງພຣະອົງ ເຮົາບໍ່ແມ່ນເຈົ້າຂອງ ຕົວເຮົາເອງ.

ເຖິງແມ່ນວ່າສິດໃນການເປັນເຈົ້າຂອງເໝືອຊີວິດຂອງເຮົາ ຈະເປັນຂອງພຣະເຈົ້າກໍຕາມແຕ່

ພຣະອົງຈະບໍ່ຊົງອ້າງສິດຂອງພຣະອົງໃນສິ່ງທີ່ຂັດແຍ່ງກັບຄວາມຕ້ອງການຂອງເຮົາ, ແນວໃດ ກໍ່ຕາມ ພຣະອົງຈະຊົງລໍຈົນກ່ວາເຮົາຈະເຂົ້າໃຈ ເຖິງເຫດຜົນຂອງການອ້າງສິດຂອງ ພຣະອົງ ແລະມອບຖວາຍຮ່າງກາຍຂອງເຮົາໂດຍສະໝັກໃຈໃຫ້ເປັນເຄື່ອງບູຊາທີ່ມີຊີວິດ ຄຳວ່າ "ມີຊີວິດ" ສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງ ເຄື່ອງບູຊາໃນພັນທະສັນຍາເດີມ ແລະເຄື່ອງບູຊາໃນພັນທະສັນຍາໃຫມ່, ພາຍໃຕ້ພັນທະສັນຍາເດີມນັ້ນ ສັດຖືກຂ້າເພື່ອຖວາຍ ເປັນເຄື່ອວບູຊາແດ່ພຣະເຈົ້າ ແຕ່ພາຍໃຕ້ພັນທະສັນຍາໃຫມ່ ເຮົາມອບຖວາຍຮ່າງກາຍ ຂອງເຮົາແດ່ພຣະເຈົ້າຂະນະທີ່ຍັງມີຊີວິດຢູ່ ຫຼືເວົ້າອີກຢ່າງໜຶ່ງວ່າ ການມອບຖວາຍຮ່າງກາຍ ຂອງເຮົາ ແດ່ພຣະເຈົ້ານັ້ນຖືວ່າເປັນການມອບຖວາຍທີ່ສົມບູນ ແລະເປັນທີ່ສິ້ນສຸດເຊັ່ນດຽວ ກັນ ກັບການມອບຖວາຍສັດພາຍໃຕ້ພັນທະສັນຍາເດີມ.

ການມອບຖວາຍຮ່າງກາຍຂອງເຮົາແດ່ພຣະເຈົ້າ ຄວນເປັນສິ່ງທີ່ເຮົາກະທຳດ້ວຍຄວາມຈິງໃຈ ໂດຍເຮົາອາດສະແດງອອກໂດຍການອະທິຖານດັ່ງຕົວຢ່າງນີ້ "ຂ້າແດ່ ອົງພຣະຜູ້ເປັນເຈົ້າດ້ວຍ ລາຄາທີ່ພຣະອົງຊົງຈ່າຍເພື່ອໄຖ່ຂ້າພຣະອົງຈາກບາບນັ້ນ ຂ້າພຣະອົງໄດ້ເຂົ້າໃຈແລ້ວວ່າ ຂ້າພຣະອົງບໍ່ໄດ້ເປັນເຈົ້າຂອງຕົນເອງອີກຕໍ່ໄປ ແຕ່ຂ້າພຣະອົງເປັນຂອງພຣະອົງ ດັ່ງນັ້ນ ຂ້າພຣະອົງຈຶ່ງຕັ້ງໃຈມອບຖວາຍຕົວຂອງຂ້າພຣະອົງ ທັງຮ່າງກາຍ ແລະທຸກສິ່ງທີ່ມີຢູ່ໃນນັ້ນ ແດ່ພຣະອົງ ໃຫ້ເປັນດັ່ງເຄື່ອງບູຊາທີ່ມີຊີວິດ ຕັ້ງແຕ່ບັດນີ້ເປັນຕົ້ນໄປ ຂ້າພຣະອົງທູນຂໍ ຕໍ່ພຣະອົງ ແລະຂ້າພຣະອົງວາງໃຈໃຫ້ພຣະອົງໂດຍສົມບູນ ໃນນາມຂອງອົງພຣະເຢຊູຄຣິດເຈົ້າ ອາແມນ."

## ການປ່ຽນແປງຄວາມຄິດຈິດໃຈຂອງພວກເຮົາ ໃຫມ່

ເມື່ອເຮົາຍອມຮັບແລ້ວວ່າ ພຣະເຈົ້າຊົງເປັນເຈົ້າຂອງຊີວິດຂອງເຮົາແລ້ວ ຫົນທາງທີ່ຈະຖືກ ເປີດອອກ ໃຫ້ພຣະອົງເຂົ້າມາທຳການປ່ຽນແປງສິ່ງທີ່ຈຳເປັນ ທັງໃນການດຳເນີນຊີວິດ ແລະໃນຄວາມຄິດຂອງເຮົາ ເຮົາກໍ່ຈະເລີ່ມມີປະສົບການທີ່ "ຄວາມຄິດຈິດໃຈຂອງເຮົາ ໄດ້ຮັບການປ່ຽນໃຫມ່" ຈາກນັ້ນ ເມື່ອຄວາມຄິດຈິດໃຈຂອງເຮົາໄດ້ຮັບການປ່ຽນໃຫມ່ແລ້ວ ເຮົາກໍຈະເລີ່ມ "ພິສູດໄດ້ວ່າ: [ໂດຍຄົ້ນພົບຈາກປະສົບການ] ອັນໃດຄືນ້ຳພຣະໄທທີ່ດີ ເປັນທີ່ພໍພຣະໄທ ແລະດີທີ່ສຸດ" ຂອງພຣະເຈົ້າ ເຮົາໄດ້ເຫັນແລ້ວວ່າຄວາມຄິດຈິດໃຈເກົ່າ ທີ່ຍັງບໍ່ໄດ້ຮັບການປ່ຽນໃຫມ່ຂອງເຮົານັ້ນ "ກໍເປັນສັດຕູຕໍ່ພຣະເຈົ້າ " (ໂຣມ8:7) ພຣະເຈົ້າ ຈະບໍ່ມີວັນເປີດເຜີຍນ້ຳພຣະໄທຂອງພຣະອົງສຳລັບຊີວິດຂອງເຮົາຕໍ່ຄວາມຄິດຈິດໃ ຈທີ່ຍັງເປັນສັດຕູຕໍ່ພຣະອົງ ແຕ່ເມື່ອຄວາມຄິດຈິດໃຈຂອງເຮົາໄດ້ຮັບການປ່ຽນໃຫມ່ຢ່າງຕໍ່ເນື່ອງ ແລະ ມີຄວາມເຫັນພ້ອມກັບພຣະເຈົ້າແລ້ວ ເຮົາກໍສາມາດຮັບຮູ້ນ້ຳພຣະໄທຂອງພຣະເຈົ້າ ແລະ ດຳເນີນຊີວິດໃນທາງຂອງພຣະເຈົ້າໄດ້.

ຂະບວນການຂອງການປ່ຽນຄວາມຄິດຈິດໃຈຂອງເຮົານັ້ນ ສິ່ງຜົນກະທົບຕໍ່ສາມດ້ານຫຼັກໆ ໃນຊີວິດຂອງເຮົາໄດ້ແກ່ ເປົ້າຫມາຍທີ່ເຮົາສະແຫວງຫາ, ແຮງຈູງໃຈໃນການສະແຫວງຫາ ເປົ້າຫມາຍ ແລະວິທີການທີ່ເຮົາໃຊ້ເພື່ອໃຫ້ບັນລຸເປົ້າຫມາຍເຫຼົ່ານັ້ນ, ໂດຍທຳມະຊາດແລ້ວ ເຮົາທຸກຄົນລ້ວນແຕ່ເອົາຕົນເອງເປັນສູນກາງ ແຕ່ລະຄັ້ງເມື່ອເຮົາປະເຊີນກັບການຕັດສິນໃຈ ເຮົາຈະຖາມຕົວເຮົາເອງວ່າສິ່ງນີ້ຈະມີຜົນກະທົບຫຍັງຕໍ່ຂ້ອຍ?, ຂ້ອຍຈະໄດ້ຮັບຫຍັງຈາກສິ່ງນີ້?, ຂ້ອຍຈະໄດ້ຜົນລັບແບບທີ່ຂ້ອຍຕ້ອງການບໍ່? ແຕ່ເມື່ອເຮົາປະຕິເສດການຄວບຄຸມຊີວິດ ຂອງເຮົາເອງ ແລະຍອມຈຳນົນຕໍ່ອົງພຣະຜູ້ເປັນເຈົ້າຂອງພຣະຄຣິດ ສິ່ງເຫຼົ່ານີ້ທັງໝົດຈະເລີ່ມ ປ່ຽນແປງໄປ.

ເຮົາຮຽນຮູ້ຈາກ ແບບຢ່າງຄຳອະທິຖານຂອງພຣະເຢຊູ ມັດທາຍ6:9-13 ວ່າເປົ້າຫມາຍຂອງ ຊີວິດນີ້ຄື "ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ" ແລະແຮງຈູງໃຈກໍຄື "ຣາຊອານາຈັກຣິດອຳນາດ ແລະພຣະຣັດສະໝີກໍເປັນຂອງພຣະອົງສືບໆໄປເປັນນິດ" ເມື່ອຄຳຖາມທີ່ເຮົາມີຕໍ່ເປົ້າຫມາຍ ແລະແຮງຈູງໃຈໄດ້ຮັບການແກ້ໄຂແລ້ວ ເຮົາກໍປະເຊີນກັບ ຄຳຖາມທີ່ກ່ຽວກັບວິທີການຄື: ຂ້ອຍຈະດຳເນີນຊີວິດເພື່ອສິ່ງເສີມອານາຈັກຂອງພຣະເຈົ້າ ແລະພຣະສິຣິຂອງພຣະເຈົ້າໄດ້ແນວໃດ?

ຄຳສອນໃນພຣະຄຳພີ ແລະປະສົບການຂອງເຮົາກໍ່ຢືນຢັນວ່າ ບໍ່ມີຄວາມພະຍາຍາມ ຫຼືຄວາມ ສາມາດຂອງເຮົາເອງແມ່ນບໍ່ພຽງພໍ ເຮົາຕ້ອງການພະລັງອຳນາດທີ່ຫຼາຍກ່ວານີ້ ແລະຄຳຕອບ ຂອງພຣະເຈົ້າຕໍ່ກັບຄວາມຕ້ອງການດັ່ງກ່າວນີ້ມີຢູ່ໃນເຊກາຣິຢາ4:6 "ບໍ່ແມ່ນໂດຍກຳລັງທະ ຫານ  ຫຼືໂດຍກຳລັງຂອງເຈົ້າເອງ ແຕ່ໂດຍພຣະວິນຍານຂອງເຮົາ ພຣະເຈົ້າຢາເວອົງຊົງຣິດ ອຳນາດຍິ່ງໃຫຍ່ກ່າວດັ່ງນີ້ແຫຼະ." ພະລັງອຳນາດດຽວທີ່ພຽງພໍຄື ຣິດອຳນາດຂອງພຣະວິນຍານ ບໍຣິສຸດ.

## ດຳເນີນຊີວິດດ້ວຍຄວາມເຊື່ອ

ໃນຊ່ວງຕົ້ນປະຫວັດສາດຂອງມະນຸດ ເຮົາໄດ້ເຫັນພາບຂອງຊາຍຄົນໜຶ່ງທີ່ຮຽນຮູ້ໃນການດຳ ເນີນຊີວິດກັບພຣະເຈົ້າຄື "ລາວໄດ້ດຳເນີນຊີວິດໃນຄວາມສາມັກຄີທຳ ຕິດສະໜິດກັບພຣະ ເຈົ້າ ແລະລາວກໍ່ໄດ້ຫາຍຕົວໄປ ເພາະພຣະເຈົ້າໄດ້ຮັບເອົາລາວໄປ." (ປະຖົມມະການ5:24) ໃນການດຳເນີນຊີວິດຢ່າງຕໍ່ເນື່ອງເຊັ່ນນີ້ ເອນົກໄດ້ພັດທະນາຄວາມໃກ້ສິດ ສະໜິດສະໜົມ ກັບພຣະເຈົ້າ ຈົນໃນທີ່ສຸດການຮັກສາມິດຕະພາບກັບພຣະເຈົ້າໄວ້ບໍ່ໃຫ້ຂາດຕອນ ໄດ້ກາຍເປັນ ຊີວິດປົກກະຕິຂອງເຂົາຫຼາຍກ່ວາການກັບໄປໃນຜ່າຍໂລກຂອງເຂົາ.

ໃນເຮັບເຣີ11:5-6 ໄດ້ເຜີຍເຄັດລັບໃນການດຳເນີນຊີວິດຂອງເອນົກກັບພຣະເຈົ້າ "ເພາະເອນົກ ມີຄວາມເຊື່ອແບບນີ້ ພຣະເຈົ້າຈຶ່ງຊົງຮັບເພີ່ນຂຶ້ນໄປ [ຊົງຮັບເພີ່ນຂຶ້ນໄປໝາຍເຖິງການປ່ຽນ ສະພາບຈາກການດຳລົງຊີວິດຜ່າຍໂລກໄປຢູ່ໃນສະຫວັນອັນເປັນນິຣັນ] ເພື່ອບໍ່ໃຫ້ເພີ່ນພົບກັບ ຄວາມຕາຍ ແລະບໍ່ມີຜູ້ໃດພົບເຫັນເພີ່ນ ເພາະພຣະເຈົ້ຊົງຮັບເອົາເພີ່ນໄປແລ້ວ ອັນຫນຶ່ງ ກ່ອນທີ່ຊົງຮັບເອົາເພີ່ນຂຶ້ນໄປນັ້ນ ມີຜູ້ເປັນພະຍານວ່າເພີ່ນເປັນທີ່ພໍພຣະໄທພຣະເຈົ້າ. ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະໄທພຣະເຈົ້າບໍ່ໄດ້" ຄຳສຳຄັນທີ່ຖືກກ່າວຕະຫຼອດ ເພື່ອເນັ້ນຢ້ຳຄືຄວາມເຊື່ອ ຄວາມເຊື່ອເປັນຂໍ້ກຳນົດພື້ນຖານທີ່ຈຳເປັນໃນການດຳລົງຊີວິດ ກັບພຣະເຈົ້າທີ່ຈະເຮັດໃຫ້ພຣະອົງພໍພຣະໄທ.

ຄວາມເຊື່ອແມ່ນຫຍັງ? ໃນເຮັບເຣີ 11:1 ກ່າວວ່າ:

> "ອັນໜຶ່ງຄວາມເຊື່ອຄືຄວາມແນ່ນອນໃຈ ໃນສິ່ງທີ່ຍັງບໍ່ເຫັນກັບຕາ." (ພຄສ2015)

ຄວາມເຊື່ອເປັນ "ການສຳພັດ" ໃນຜ່າຍວິນຍານ ຊຶ່ງເຮັດໃຫ້ເຮົາສາມາດໄຈ້ແຍກ ຫຼື ຮັບຮູ້ ສິ່ງຕ່າງໆ ທີ່ບໍ່ໄດ້ເປີດເຜີຍຕໍ່ສັນຊາດຕະຍານຕາມທຳມະຊາດຂອງເຮົາໄດ້ ຄວາມເຊື່ອເຊື່ອມຕໍ່ ເຮົາກັບຄວາມເປັນຈິງທີ່ເບິ່ງບໍ່ເຫັນດ້ວຍຕາເປົ່າສອງປະການຄື:

ຕົວຂອງພຣະເຈົ້າເອງ ແລະ ພຣະອັດຈະນະຂອງພຣະເຈົ້າ.

ໃນຖານະຄຣິສຕຽນໂປໂລໄດ້ບອກກັບເຮົາວ່າ "ດ້ວຍວ່າ,
ພວກເຮົາດຳເນີນຊີວິດຕາມຄວາມ ເຊື່ອ ບໍ່ແມ່ນຕາມທີ່ຕາເຫັນ"
(2ໂກຣິນໂທ5:7) ການເບິ່ງເຫັນນີ້ຫມາຍເຖິງຄວາມຮູ້ສຶກທາງ
ປະສາດສຳຜັດໂດຍທົ່ວໄປ ການເບິ່ງເຫັນຖືກນຳສະເຫນີໃຫ້
ເປັນສິ່ງກົງກັນຂ້າມກັບຄວາມເຊື່ອ ດັ່ງນັ້ນ
ຄວາມເຊື່ອຈຶ່ງປະຕິເສດການໄວ້ວາງໃຈໃນປະສາດສຳຜັດ
ແລະການໄວ້ວາງໃຈໃນປະ ສາດສຳຜັດກໍປະຕິເສດຄວາມເຊື່ອ ດ້ວຍເຫດນີ້
ເຮົາທຸກຄົນຕ້ອງປະເຊີນກັບຄຳຖາມວ່າ ສິ່ງໃດເປັນຈິງສຳລັບຂ້ອຍຫຼາຍກ່ວາກັນ
ພຣະເຈົ້າແລະພຣະອັດຈະນະຂອງພຣະອົງ ຫຼື ຄວາມ ຮູ້ສຶກ
ຂອງຈິດໃຈແລະຄວາມຮູ້ສຶກທາງປະສາດສຳຜັດຂອງຂ້ອຍເອງ?

ຄວາມເຊື່ອທີ່ແທ້ຈິງນັ້ນ ຍຶດຕິດຢູ່ກັບພຣະເຈົ້າ
ແລະພຣະອັດຈະນະຂອງພຣະອົງຢ່າງບໍ່ປ່ຽນ ແປງ ແລະ
ປະຕິເສດຄວາມຮູ້ສຶກຕ່າງໆຂອງປະສາດສຳຜັດ ເມື່ອໃດກໍຕາມທີ່ຄວາມຮູ້ສຶກ
ເຫຼົ່ານີ້ບໍ່ສອດຄ່ອງກັບພຣະຄຳຂອງພຣະເຈົ້າ
ແບບຢ່າງທີ່ຍິ່ງໃຫຍ່ໃນພຣະຄຳພີຂອງຄວາມເຊື່ອ ເຊັ່ນນີ້ຄື ອັບຣາຮາມ
ອັນທີ່ຈິງອັບຣາຮາມຖືກເອີ້ນວ່າ ''ບິດາຂອງບັນດາຜູ້ເຊື່ອ'' ແລະ
ເຮົາຖືກທ້າທາຍໃຫ້ "ມີຄວາມເຊື່ອຕາມແບບຂອງອັບຣາຮາມ
ບິດາຂອງເຮົາທັ້ງຫຼາຍ" (ໂຣມ4:12)
ຄຳເວົ້າຂອງໂປໂລໃນເວລານີ້ຢືນຢັນເຖິງສິ່ງທີ່ໄດ້ກ່າວໄວ້ກ່ຽວກັບຊີວິດຄຣິສຕຽນຄື
ການເປັນຄຣິສຕຽນບໍ່ໄດ້ມີສະເພາະທີ່ຄົງສະພາບດຶມຢູ່ຕະຫຼອດເວລາ ແຕ່ເປັນ
"ການດຳ ເນີນໄປ" ເຊິ່ງເຮົາກ້າວຫນ້າໄປຢ່າງຕໍ່ເນື່ອງ
ໂດຍກ້າວໄປດ້ວຍຄວາມເຊື່ອກ້າວຕໍ່ກ້າວ.

## ວິທີດຳເນີນຊີວິດດ້ວຍຄວາມເຊື່ອ

ຂໍ້ຖັດໄປໃນໂຣມ4:17-21 ໂປໂລໄດ້ຍົກຕົວຢ່າງໂດຍສະເພາະ
ການດຳເນີນຊີວິດດ້ວຍຄວາມ ເຊື່ອຂອງອັບຣາຮາມຄື
ພຣະເຈົ້າຊົງສັນຍາກັບອັບຣາຮາມວ່າເຂົາ ແລະຊາຣາຈະມີບຸດຄົນໜຶ່ງ
ຊຶ່ງຈະກາຍເປັນບິດາຂອງຊາດທີ່ຍິ່ງໃຫຍ່ ດ້ວຍວ່າ ທັງສອງອາຍຸຫຼາຍແລ້ວ
ສິ່ງດັ່ງກ່າວ ບໍ່ສາມາດເປັນໄປໄດ້ໃນທາງກາຍຍະພາບ
ອີກທັງດ້ວກກໍຍັງບໍ່ໄດ້ຖືກຳເນີດມາ ແຕ່ເມື່ອຕ້ອງ
ປະເຊີນກັບຄວາມຂັດແຍ່ງລະຫວ່າງ ສິ່ງທີ່ພຣະເຈົ້າຊົງສັນຍາ
ກັບສິ່ງທີ່ປະສາດສຳຜັດຂອງ ອັບຣາຮາມ ກ່ຽວກັບສະພາບຮ່າງກາຍຂອງເຂົາ
ແລະຊາຣາ ອັບຣາຮາມເລືອກທີ່ຍຶດໝັ້ນ ໃນພະສັນຍາຂອງພຣະເຈົ້າ
ແທນທີ່ຈະຖືກຈຳກັດດ້ວຍສະພາບຮ່າງກາຍຂອງເຂົາ ແລະຊາຣາ.

> “ເພິ່ນບໍ່ໄດ້ສູນເສຍຄວາມເຊື່ອ
> ແລະບໍ່ໄດ້ສົງໄສໃນຄຳສັນຍາຂອງພຣະເຈົ້າ,
> ແຕ່ຄວາມເຊື່ອຂອງເພິ່ນເຂັ້ມແຂງຂຶ້ນ, ເພິ່ນຈຶ່ງໄດ້ຖວາຍກຽດຍົດ
> ແກ່ພຣະເຈົ້າ. ເພິ່ນເຊື່ອຫມັ້ນວ່າພຣະເຈົ້າຊົງຣິດອຳນາດ
> ຈະເຮັດສຳເລັດ ຕາມພຣະສັນຍາທີ່ມີໄວ້ກັບຕົນ.” (ໂຣມ4:20;
> ພຄສ2015)

ໃນການດຳເນີນຊີວິດໂດຍຄວາມເຊື່ອນີ້
ມີຄວາມສຳພັນກັບໂລກສອງໜ່ວຍໄປພ້ອມໆກັນຄື ໂດຍທາງປະສາດສຳຜັດ
ເຮົາມີຄວາມສຳພັນກັບ ໂລກທຳມະຊາດດ້ານກາຍຍະພາບຮອບຕົວ ເຮົາ
ແລະໂດຍຄວາມເຊື່ອ
ຄວາມສຳພັນກັບໂລກທີ່ເບິ່ງບໍ່ເຫັນດ້ວຍຕາອັນເປັນນິຣັນດອນ ຂອງພຣະເຈົ້າ
ແລະພຣະອັດຈະນະຂອງພຣະອົງ ໃນ2ໂກຣິນໂທ4:18; ໂປໂລໄດ້ເຮັດໃຫ້ໂລກ
ທັງສອງນີ້ມີຄວາມແຕກຕ່າງກັນເຂົາກ່າວວ່າພຣະປະສົງຂອງພຣະເຈົ້າສຳເລັດໃນຊີ
ວິດເຮົາໄດ້ ເຖິງແມ່ນເປັນເວລາທີ່ຕ້ອງຜ່ານຄວາມທຸກຍາກ "ເພາະວ່າ
ພວກເຮົາບໍ່ໄດ້ປັກໃຈໃສ່ໃນສິ່ງທີ່ ຕາເຫັນຢູ່, ແຕ່ໃນສິ່ງທີ່ຕາບໍ່ເຫັນ. ດ້ວຍວ່າ,
ສິ່ງທີ່ຕາເຫັນ ຢູ່ນັ້ນກໍເປັນຂອງຊົ່ວຄາວ, ແຕ່ສິ່ງ ທີ່ຕາບໍ່ເຫັນນັ້ນ
ກໍດຳລົງຢູ່ຖາວອນຕະຫຼອດໄປ." ໃນຄຳເວົ້າຂອງໂປໂລໃຊ້ນັ້ນມີເຈດຕະນາ
ເຮັດໃຫ້ເບິ່ງຄືຂັດແຍ່ງ ເຮົາຈະເບິ່ງເຫັນສິ່ງທີ່ເບິ່ງບໍ່ເຫັນໄດ້ແນວ ໃດ?
ຄຳຕອບກໍຄືໂດຍຄວາມ ເຊື່ອ ຄວາມເຊື່ອຄື "ການສຳພັດ" ຜ່ານອິນຍານ
ເຊິ່ງເຮົາໃຊ້ເບິ່ງສິ່ງທີ່ເປັນຈິງຂອງໂລກ ໃນນິຣັນດອນ
ທີ່ເຮົາເບິ່ງບໍ່ເຫັນດ້ວຍຕາເປົ່າ.

ສິ່ງທີ່ສຳຄັນຄື ການປະເມີນສິ່ງທີ່ປະສາດສຳຜັດໄດ້ຮັບຢ່າງຖືກຕ້ອງ
ເພາະພຣະເຈົ້າບໍ່ໄດ້ຊົງຂໍ ໃຫ້ເຮົາປິດຫູ ປິດຕາ
ແລະຢ່າງໃນມາຄືກັບວ່າໂລກທາງກາຍຍະພາບຮອບຕົວເຮົານັ້ນບໍ່ມີຢູ່ຈິງ
ຄວາມເຊື່ອບໍ່ແມ່ນຄວາມຄິດທີ່ລຶກລັບ
ເຮົາບໍ່ໄດ້ສົງໄສໃນຄວາມເປັນຈິງຂອງສິ່ງທີ່ປະສາດ ສຳຜັດ ເຮົາໄດ້ເປີດເຜີຍ
ແຕ່ເຮົາສົງໃສໃນ 'ຜົນລັບສຸດທ່າຍ' ຂອງມັນ.

ອັບຣາຮາມ ເປັນຕົວຢ່າງທີ່ສົມບູນແບບຂອງເລື່ອງນີ້
ປະສາດສຳຜັດຂອງເຂົາບອກເຂົາວ່າ ດ້ວຍສະພາບທາງກາຍຍະພາບແລ້ວ
ເຂົາບໍ່ສາມາດໃຫ້ກຳເນີດບຸດໄດ້ ແຕ່ພຣະເຈົ້າຊົງສັນ ຍາວ່າ
ເຂົາຈະມີບຸດຊາຍຄົນຫນຶ່ງ ອັບຣາຮາມບໍ່ໄດ້ສະແສ້ງວ່າສິ່ງທີ່ປະສາດສຳຜັດຂອງເຂົາ
ໄດ້ເປີດເຜີຍກັບເຂົາກ່ຽວກັບຮ່າງກາຍຂອງເຂົາເອງນັ້ນບໍ່ເປັນຈິງ
ເຂົາພຽງແຕ່ປະຕິເສດ ທີ່ຈະຍອມຮັບວ່າ ສິ່ງນັ້ນຄືຜົນລັບສຸດທ້າຍ
ເມື່ອພຣະຄຳຂອງພຣະເຈົ້າສັນຍາຢ່າງໜຶ່ງ
ແລະປະສາດສຳຜັດຂອງເຂົາບອກັບເຂົາອີກຢ່າງໜຶ່ງ
ເຂົາຈະຍຶດໝັ້ນໃນພຣະສັນຍາຂອງ ພຣະເຈົ້າຢ່າງບໍ່ປ່ຽນແປງ
ໂດຍບໍ່ປ່ອຍໃຫ້ປະສາດສຳຜັດເຮັດໃຫ້ເຂົາສົງໃສໃນພຣະສັນຍານັ້ນ
ໃນທີ່ສຸດຫຼັງຈາກທີ່ຄວາມເຊື່ອຂອງເຂົາໄດ້ຖືກທົດສອບແລ້ວ
ສະພາບຮ່າງກາຍຂອງເຂົາ
ກໍໄດ້ຮັບການປັບໃຫ້ສອດຄ່ອງກັບສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້
ແລະເຂົາກໍມີສະພາບ
ຝ່າຍກາຍຍະພາບທີ່ສາມາດມີບຸດໄດ້ຈິງໆ.ໂດຍບໍ່ມີການປ່ອຍໃຫ້ຄວາມຮູ້ສຶກຂອງລ
າວເຮັດໃຫ້ລາວສົງໃສຄຳສັນຍານັ້ນ. ໃນທີ່ສຸດ,
ຫຼັງຈາກຄວາມເຊື່ອຂອງລາວໄດ້ຮັບການທົດສອບ,
ສະພາບທາງຮ່າງກາຍຂອງລາວໄດ້ຖືກນຳມາໃຫ້ສອດຄ່ອງກັບສິ່ງທີ່ພຣະເຈົ້າໄດ້ສັນ
ຍາໄວ້, ແລະລາວກາຍເປັນຄົນທີ່ມີຄວາມສາມາດໃນການເກີດລູກ.

ດ້ວຍຄວາມເຊື່ອມີຄວາມກ່ຽວຂ້ອງຢ່າງໃກ້ສິດກັບຄວາມຖ່ອມໃຈ ໃນໂຣມ3:27
ໂປໂລ ບອກກັບເຮົາວ່າ
ການໂອ້ອວດນັ້ນບໍ່ລວມຢູ່ໃນກົດແຫ່ງຄວາມເຊື່ອສ່ວນໃນຮາບາກຸກ2:4
ບອກກັບເຮົາວ່າ ການໂອ້ອວດ ຄວາມຫມັ້ນໃຈໃນຕົວເອງ
ແລະຄວາມເຊື່ອອັນຖ່ອມໃຈ
ເປັນສິ່ງທີ່ກົງກັນຂ້າມເຊິ່ງແຍກອອກຈາກກັນໂດຍສິ້ນເຊີງ.

> "ຕໍ່ໄປນີ້ ແມ່ນຖ້ອຍຄຳຂອງເຮົາ
> ຄົນທີ່ເຮັດຊົ່ວຈະບໍ່ລອດຊີວິດຢູ່ໄດ້ເລີຍ ແຕ່ຄົນທີ່ຊອບທຳຈະມີຊີວິດຢູ່
> ດ້ວຍວ່າ, ພວກເຂົາຊື່ສັດຕໍ່ພຣະເຈົ້າ" (ພຄສ2015)

ຈິດວິນຍານທີ່ອວດອົ່ງທະນົງຕົວ ເຊິ່ງຖືກຍົກຂຶ້ນນັ້ນໝາຍເຖິງ
ບຸກຄົນທີ່ໄວ້ວາງໃຈໃນຄວາມ ສາມາດຕາມທຳມະຊາດ
ແລະປະສາດສຳຜັດຂອງຕົນເອງ ສ່ວນຄົນຊອບທຳທີ່ດຳເນີນຊີວິດ
ໂດຍຄວາມເຊື່ອຂອງເຂົານັ້ນຄືບຸກຄົນທີ່ປະຕິເສດຄວາມເຊື່ອໝັ້ນ
ໃນຄວາມສາມາດຂອງ ຕົນເອງ
ແລະສິ່ງທີ່ປະສາດສຳຜັດຂອງເຂົາເປີດເຜີຍກັບເຂົາເຊັ່ນດຽວກັບອັບຣາຮາມ

ເຂົາເລືອກ
ທີ່ຈະວາງໃຈໃນຄວາມຈິງທີ່ເບິ່ງບໍ່ເຫັນແຕ່ຖາວອນນິຣັນດອນຂອງພຣະເຈົ້າ
ແລະພຣະວັດຈະນະຂອງພຣະອົງ.

ໃນມັທາ6:8 ມະນຸດເອີ້ຍ "ພຣະເຈົ້າຢາເວໄດ້ບອກພວກເຮົາວ່າ
ແມ່ນຫຍັງເປັນສິ່ງທີ່ດີ? ສິ່ງທີ່ ພຣະອົງຕ້ອງການຈາກເຮົານັ້ນແມ່ນດັ່ງນີ້:
ເຮັດສິ່ງທີ່ຖືກຕ້ອງ, ສະແດງຄວາມຮັກອັນໝັ້ນຄົງ
ແລະໃຊ້ຊີວິດໃນຄວາມສາມັກຄີທຳກັບພຣະເຈົ້າຂອງພວກເຮົາ
ດ້ວຍຄວາມຖ່ອມໃຈ" ພຣະທຳຕອນນີ້ໄດ້ແນະນຳວ່າ
ຄວາມຖ່ອມໃຈເປັນສິ່ງທີ່ເຮົາຕ້ອງຕັດສິນໃຈເຮັດ ເພື່ອທີ່ຈະ
ດຳເນີນຊີວິດໄປກັບພຣະເຈົ້າ (ອະທິບາຍເພີ່ມເຕີມ) ຄຳວ່າ "ຄວາມຖ່ອມໃຈ"
ສະທ້ອນເຖິງ ພາສາຮິນດູໄດ້ຢ່າງຖືກຕ້ອງ
ເຊິ່ງບົ່ງບອກເຖິງການຕັດສິນໃຈທີ່ເຮົາແຕ່ລະຄົນເຮັດ "ຂ້າແຕ່ອົງພຣະຜູ້ເປັນເຈົ້າ
ຂ້າພຣະອົງຂໍປະຕິເສດຄວາມໝັ້ນໃຈໃນຄວາມສາມາດ ແລະ
ຄວາມຮູ້ຂອງປະສາດສຳພັດຂອງຂ້າພຣະອົງ
ຂ້າພຣະອົງເລືອກທີ່ຈະວາງໃຈໃນພຣະອົງ ແລະ
ໃນພຣະຄຳຂອງພຣະອົງຫຼາຍກ່ວາໂດຍພຣະຄຸນຂອງພຣະອົງ
ຂ້າພຣະອົງຈະດຳເນີນຊີວິດ ໂດຍຄວາມເຊື່ອ ບໍ່ແມ່ນດ້ວຍສິ່ງທີ່ຕາເບິ່ງເຫັນ"
ທັດສະນະຄະຕິຂອງການເຝົ້າພາພຣະເຈົ້າ ດ້ວຍຄວາມຖ່ອມໃຈນີ້
ເປີດທາງໃຫ້ກັບການດຳເນີນຊີວິດຢ່າງໃກ້ສິດ ແລະຕໍ່ເນື່ອງໄປກັບ ພຣະອົງ.

ໃນຈົດໝາຍຄຳສອນສະບັບຕໍ່ໄປ
ເຮົາຈະເວົ້າເຖິງພາກປະຕິບັດທີ່ໄດ້ຜົນຢ່າງຍິ່ງເຊິ່ງເຮົາ
ສາມາດເຝິກຝົນການດຳເນີນຊີວິດທີ່ໃກ້ສິດກັບພຣະເຈົ້າໄດ້.

## ຈົດໝາຍຄຳສອນ

ຂໍ້ຄວາມ ຖອດສຽງ: TL-L088-100-LAO
ບັນທຶກຫຼ້າສຸດ: 30 Oct 2024
ເວັບໄຊທ໌: derekprince.com/lao



## ປຶ້ມຄຳສອນ

ໃຫ້ຄວາມຈະແຈ້ງ ແລະ ຂະຫຍາຍຄວາມເຂົ້າໃຈ ຂອງທ່ານກ່ຽວກັບ ພຣະຄຳພີ ດ້ວຍ collection ປຶ້ມຄຳສອນ ຄຣິດສະຕຽນ ຂອງ ອາຈານ ດເຣັກ ປຶ້ຣນຊ



## ການຜ້ຳດ່ຽວ ປະຈຳວັນ

ຄົ້ນຫາ ບົດຜ້ຳດ່ຽວປະຈຳວັນ ທີ່ສ້ຳງ ແຮງບັນດານໃຈຕາມຫຼັກການ ພຣະຄຳພີ ໂດຍຄຳ ສອນພາກປະຕິບັດ ຂອງ ອາຈານ ດເຣັກ ປຶ້ຣນຊ ເພື່ອຍົກລະດັບ ຄວາມເຊື່ອ ຄຣິດສະຕຽນ ຂອງທ່ານໃຫ້ຜິຣ.



## ລາຍການວິທະຍຸ ທີ່ເປັນມ່ລະດົກ

ຮັບຟັງຖ້ອຍຄຳ ທີ່ສ້ຳງແຮງບັນດານໃຈ 10 ນາທີ ແລະ ເຊື່ອມຕໍ່ ຄວາມເຊື່ອ ເຂົ້ຳກັບຊີວິດ ຜ່ານ podcast ເຊິ່ງເປັນມ່ລະດົກ ຂອງອາຈານ ດເຣັກ ປຶ້ຣນຊ



## ຄຳເທດສະໜາ

ຮັບຊົມ ຄຳເທດສະໜາ ເຊິ່ງເປັນຕົ້ນສະບັບ ທີ່ທ່ຳສ້ຳເນ້ຳຂຶ້ນໃໝ່ ໃນລະບົບ ດິຈິຕ້ອນ ໂດຍ ອາຈານ ດເຣັກ ປຶ້ຣນຊ ລວມທ້ຳຂໍ້ຄວາມ ຖອດສຽງ ສະບັບເຕັມ ( ດາວໂຫຼດຜິຣ )



## ແອັບທີ່ເປັນທ່ຽງທ່ານ

ດາວໂຫຼດ ແອັບທີ່ເປັນທ່ຽງທ່ານ ຂອງພັນທະກິດ ດເຣັກ ປຶ້ຣນ ໄດ້ຜິຣ ເພື່ອເສີມສ້ຳງຄວາມເຊື່ອຂອງ ທ່ານໄດ້ທຸກທີ່ ທຸກເວລ



## ການປ່າວປະກາດ

ປ່າວປະກາດຊີວິດ ແລະ ພົບກັບປະສົບການ ໃນລິດອ່ຳນ2ດຂອງຖ້ອຍຄຳ ພຣະເຈ້ຳ ທີ່ ສ2ມ2ດປ່ຽນແປງຊີວິດໄດ້ ໂດຍຄຳປ່າວປະກາດຂອງເຮົ2 ທີ່ຂຽນຕ2ມຫຼັກກ2ນຂອງ ພຣະຄຳພີ